ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 1375 /ກປ

ນະຄອນຫຼວງວຽງຈັນ, ວັນທີ 06/12/18

ດ່ວນ

# ແຈ້ງການ

ເຖິງ: - ຫ້ອງການ, ບັນດາກົມ, ສະຖາບັນ, ສູນ;
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້ ແລະ ໂຮງຮຽນຊົນລະປະທານ ຊັ້ນສູງທ່າງ່ອນ.

ເລື່ອງ: ໃຫ້ກວດກາຕຳແໜ່ງບໍລິຫານ ສຳລັບຜູ້ທີ່ຮັບຜິດຊອບວຽກງານໂຄງການ.

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 99/ນຍ, ລົງວັນທີ 09/03/2017.
- ອີງຕາມ ດຳລັດ ວ່າດ້ວຍຕຳແໜ່ງບໍລິຫານຂອງພະນັກງານ-ລັດຖະກອນ ສະບັບເລກທີ 203/ລບ ລົງວັນທີ 04/07/2017.
- ອີງຕາມ ການຕົກລົງຂອງກອງປະຊຸມຂອງຄະນະປະຈຳພັກກະຊວງ ຄັ້ງວັນທີ 07/11/2018.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນໄລຍະຜ່ານມາການດຳລົງຕຳແໜ່ງພາຍໃນ ກະຊວງກະສິກຳ ແລະ ປ່າໄມ້ ຍັງມີການຄວບຕຳແໜ່ງ ຄື ຕຳແໜ່ງຮັບຜິດຊອບວຽກໂຄງການຊ່ວຍເຫຼືອຂອງສາກົນ ແລະ ຕຳແໜ່ງບໍລິຫານລັດ ເຊິ່ງອີງຕາມດຳລັດ ວ່າດ້ວຍຕຳແໜ່ງບໍລິຫານຂອງພະນັກງານ-ລັດຖະກອນ ສະບັບເລກທີ 203/ລບ ລົງວັນທີ 04/07/2017 ມາດຕາ 07 ການສິ້ນສຸດອຸດໜູນຕຳແໜ່ງຂໍ້ 03 ຄື ກໍລະນີຖືກແຕ່ງຕັ້ງຢ່າງເປັນທາງການຢູ່ລັດວິສາຫະກິດ ຫຼື ໂຄງການຊ່ວຍເຫຼືອຂອງສາກົນ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂອງພະນັກງານ-ລັດຖະກອນທີ່ຖືກມອບໝາຍໃຫ້ມີຄວາມສອດຄ່ອງ, ປະສິດທິຜົນສູງ ແລະ ເຮັດໃຫ້ການຈັດຕັ້ງປະຕິບັດດຳລັດດັ່ງກ່າວຢ່າງເຂັ້ມງວດຈຶ່ງແຈ້ງມາຍັງທ່ານໃຫ້ກວດກາຕຳແໜ່ງຄືນສຳຫຼັບຜູ້ທີຄວບຕຳແໜ່ງບໍລິຫານລັດ ແລະ ຕຳແໜ່ງຮັບຜິດຊອບວຽກໂຄງການຊ່ວຍເຫຼືອຂອງສາກົນ (ຫົວໜ້າ ຫຼື ຮອງຫົວໜ້າໂຄງການ). ສຳລັບກໍລະນີທີ່ມີການຄວບຕຳແໜ່ງແມ່ນໃຫ້ຮີບຮ້ອນຄົ້ນຄວ້າ ແລະ ປັບປຸງ ເພື່ອຫຼີກເວັ້ນການຄວບຕຳແໜ່ງບໍລິຫານລັດ ແລະ ຮັບຜິດຊອບວຽກໂຄງການ. ພາຍຫຼັງສຳເລັດແລ້ວໃຫ້ສັງລວມລາຍງານເຖິງກົມຈັດຕັ້ງ ແລະ ພະນັກງານ ກ່ອນວັນທີ **14 ທັນວາ 2018.**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການນີ້ດ້ວຍ.

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ